ໂທລະເລກຊົມເຊີຍຂອງ ສະຫາຍ ກິມເຈິງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ເກົາຫຼີ ທີ່ສົ່ງເຖິງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເນື່ອງໃນໂອກາດ ວັນສ້າງຕັ້ງ ພັກປະຊາຊົນ ປະຕິວັດລາວ ຄົບຮອບ 69 ປີ, ເຊິ່ງມີເນື້ອໃນດັ່ງນີ້:

ເນື່ອງໃນໂອກາດວັນສ້າງຕັ້ງ ພັກປະຊາຊົນ ປະຕິວັດລາວ ຄົບຮອບ 69 ປີ, ຂ້າພະເຈົ້າ ຂໍຝາກຄຳຊົມເຊີຍ ອັນອົບອຸ່ນ ມາຍັງ ສະຫາຍເລຂາທິການໃຫຍ່ ແລະ ສະມາຊິກພັກ ທຸກຖ້ວນໜ້າຂອງ ພັກປະຊາຊົນ ປະຕິວັດລາວ.

ຕະຫຼອດໄລຍະ 69 ປີ ຜ່ານມາ, ພັກປະຊາຊົນ ປະຕິວັດລາວ ໄດ້ຈັດຕັ້ງ ແລະ ຊີ້ນຳ-ນຳພາປະຊາຊົນລາວ ຕໍ່ສູ້ເພື່ອຄວາມເປັນເອກະລາດແຫ່ງຊາດ ແລະ ສ້າງສາສັງຄົມໃໝ່ ຢ່າງມີໄຊ, ສາມາດ ເຮັດສຳເລັດພາລະກຳຂອງຕົນ ເປັນຢ່າງດີ ໃນການເປັນເຈົ້າການ ແລະ ເປັນເສນາທິການ ໃຫ້ແກ່ການປະຕິວັດຂອງ ສປປ ລາວ.

ຂ້າພະເຈົ້າ ມີຄວາມປິຕິຊົມຊື່ນທີ່ເຫັນວ່າ ພາຍໃຕ້ການຊີ້ນຳ-ນຳພາຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ພັກ ປປ ລາວ, ພັກ-ລັດ ແລະ ປະຊາຊົນລາວ ໄດ້ຜ່ານຜ່າສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກນາໆປະການ ຢ່າງເດັດດ່ຽວໜຽວແໜ້ນ ແລະ ສາມາດຍາດໄດ້ ບັນດາຜົນສຳເລັດອັນໃຫຍ່ຫຼວງ ໃນການສູ້ຊົນ ເພື່ອຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ສະໄໝທີ XI ຂອງພັກ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ສາຍພົວພັນມິດຕະພາບ ແລະ ການຮ່ວມມື ທີ່ເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງປະເທດ ຂອງພວກເຮົາ ທີ່ໄດ້ຮັບການສ້າງຕັ້ງຂຶ້ນບົນເສັ້ນທາງສັງຄົມນິຍົມ ຈະສືບຕໍ່ໄດ້ຮັບການເສີມຂະຫຍາຍໃຫ້ແໜ້ນແຟ້ນຂຶ້ນກວ່າເກົ່າ ແລະ ຂໍອວຍພອນໄຊອັນປະເສີດ ມາຍັງ ສະຫາຍເລຂາທິການໃຫຍ່ ທອງລຸນ ສີສຸລິດ ຈົ່ງມີຜົນສຳເລັດອັນໃຫຍ່ຫຼວງກວ່າເກົ່າ ໃນໜ້າທີ່ວຽກງານອັນມີຄວາມຮັບຜິດຊອບຂອງ ສະຫາຍ.

ກິມ ເຈິງ ອຸນ

ເລຂາທິການໃຫຍ່ພັກແຮງງານເກົາຫຼີ,

ປະທານກິດຈະການແຫ່ງລັດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ເກົາຫຼີ

ວັນທີ 22 ມີນາ, ປີ ຈຸເຊ 113 (2024)

ນະຄອນຫຼວງພຽງຢາງ